

## ແວບໄຊທ໌ຂອງພະແນກເກັບເງິນລ້ຽງເດັກ

ສຳລັບຣາຍຣະອຽດຂອງ **Division of Child Support (DCS)**
www.childsupportonline.wa.gov

ການບໍຣິການຈ່າຍເງິນລ້ຽງເດັກທາງອິນເຕີແນດ:
https://fortress.wa.gov/dshs/csips/csips/default.asp

ຣາຍຣະອຽດສຳລັບຜູ້ເຄາະຮ້າຍ ຫລື ຜູ້ລອດຊີວິດຂອງຄວາມຮຸນແຮງ ຢູ່ໃນຄອບຄົວ:
http://www.dshs.wa.gov/dcs/services/domesticviolence.asp

ການຄິດໄລ່ເງິນລ້ຽງເດັກ:
http://www.courts.wa.gov/ssgen/

Washington State Department of Social and Health Services ເປັນນາຍຈ້າງທີ່ໃຫ້ໂອກາດເທົ່າທຽມກັນ ແລະ ບໍ່ແບ່ງແຍກ ຊົນຊັ້ນວັນນະໂດຍອີງໃສ່ພື້ນຖານຂອງອາຍຸ, ເພດ, ສະພາບການແຕ່ງງານ, ການອຸ່ນອ່ຽງທາງເພດ, ຜິວພັນ, ຄວາມເຊື່ອຖືທາງສາສະນາ, ສີສັນ, ເຊື້ອຊາດດັ້ງເດີມ, ນັກຮົບເກົ່າທີ່ຖືກປົດປ່ອຍຢ່າງມີກຽດ ຫລື ສະພາບການ ທະຫານ, ການປາກົດມີຂອງຄວາມເສັຽອົງຄະທາງຄວາມຮູ້ສຶກ, ຈິດໃຈ ຫລື ທາງຮ່າງກາຍ ຫລື ການໃຊ້ຫມານຳທາງ ຫລື ສັດບໍຣິການທີ່ຖືກຝຶກຝົນ ມາ ໂດຍບຸກຄົນທີ່ມີຄວາມເສັຽອົງຄະ.

## ຫ້ອງການຂອງ Division of Child Support Offices:

| | |
|---|---|
| Everett | 800-729-7580<br>425-438-4800 |
| Kennewick | 800-345-9981<br>509-374-2000 |
| Olympia | 800-345-9964<br>360-664-6900 |
| Seattle | 800-526-8658<br>206-341-7000 |
| Spokane | 800-345-9982<br>509-363-5000 |
| Tacoma | 800-345-9976<br>253-597-3700 |
| Vancouver | 800-345-9984<br>360-696-6100 |
| Wenatchee | 800-535-1113<br>509-886-6800 |
| Yakima | 800-441-0859<br>509-249-6000 |
| ສຳນັກງານໃຫຍ່ | 800-457-6202<br>360-664-5000 |

ຖ້າຫາກວ່າທ່ານຢາກຈະເປີດສຳນວນເອກສານນຳ Division of Child Support, ທ່ານສາມາດຢ້ຽມຢາມຫ້ອງການເກັບເງິນລ້ຽງລູກທ້ອງຖິ່ນຂອງທ່ານ, ຕິດຕໍ່ຫາພວກເຮົາໄດ້ທີ່ເລກ 800-442-KIDS (5437), ຫລື ໄປຫາແວບໄຊທ໌ຂອງພວກເຮົາໄດ້ທີ່:
www.childsupportonline.wa.gov

Washington State Department of Social & Health Services
*Transforming lives*

DSHS 22-021 LA (Rev. 5/16) Laotian

ໂຄງການເກັບເງິນລ້ຽງເດັກຂອງຣັດວໍຊິງຕັນ



# ຈະໄດ້ມາ ຫລື ດັດແປງຄຳສັ່ງ ເງິນລ້ຽງເດັກໂດຍທ່ານເອງ ໄດ້ແນວໃດ

Washington State Department of Social & Health Services
*Transforming lives*

## ທ່ານຕ້ອງການຢາກຮູ້ຈັກຫຍັງແດ່ – ຈະໄດ້ມາ ຫລື ດັດແປງຄຳສັ່ງເງິນລ້ຽງເດັກໂດຍທ່ານເອງໄດ້ແນວໃດ

### ທ່ານກຳລັງພະຍາຍາມທີ່ຈະຈັດແຈງ ຫລື ດັດແປງຄຳສັ່ງຈ່າຍເງິນລ້ຽງເດັກໂດຍທ່ານເອງບໍ່?

**ຄວາມຊ່ວຍເຫລືອທາງກົດໝາຍແນວໃດແດ່ທີ່ມີໄວ້ໃຫ້?**

ທ່ານມີທາງເລືອກຫລາຍໆທາງຖ້າຫາກວ່າທ່ານບໍ່ສາມາດຈ່າຍຄ່າທະນາຍຄວາມຂອງທ່ານເອງ:

- ຜູ້ອຳນວຍຄວາມສະດວກຂອງສານ
- www.courts.wa.gov/court_dir
- CLEAR (Coordinated Legal Education and Referral) 1-888-201-1014
- Washington Law Help www.washingtonlawhelp.org

### ທ່ານຈະສາມາດເອົາຟອມທີ່ທ່ານຕ້ອງການໄດ້ຢູ່ໃສ?

ມັນມີແວບໄຊທ໌ຫລາຍໆບ່ອນທີ່ທ່ານສາມາດຊອກຫາໃບຟອມໄດ້:

- ຟອມສຳລັບສານຂອງຣັດວໍຊິງຕັນ www.courts.wa.gov/forms/
- ຟອມຂອງ RDSHS Division of Child Support forms http://www.dshs.wa.gov/dcs/Resources/Forms.asp
- Washington Law Help www.washingtonlawhelp.org

ທ່ານຍັງສາມາດໄດ້ໃບຟອມເປັນເຈັ້ຽຕົວຈິງຈາກຫ້ອງການຂອງຜູ້ອຳນວຍຄວາມສະດວກ ຫລື ສະມຽນຂອງສານສູງສຸດໄດ້.



### ລູກຂອງທ່ານໄດ້ຮັບການຊ່ວຍເຫລືອຂອງຫລວງບໍ່?

ພໍ່ແມ່ຜູ້ທີ່ມີຄວາມຄຸ້ມຄອງ (CP) ຜູ້ທີ່ຮັບເງິນ TANF ສາມາດຕິດຕໍ່ຫາ ຜະແນກບໍຣິການຊຸມນຸມຊົນເພື່ອຈະຮ້ອງຂໍເອົາ "ເຫດຜົນດີທີ່ບໍ່ຮ່ວມມືນຳ" ຖ້າຫາກວ່າເຂົາເຈົ້າຢ້ານກົວວ່າການພົວພັນນຳຂອງຜະແນກ DCS ຢູ່ໃນສຳນວນເອກສານອາດຈະເປັນອັນຕະຣາຍສຳລັບ CP ຫລື ເດັກນ້ອຍ ຢູ່ໃນຄອບຄົວ. ອັນນີ້ຈະຈຳກັດຄວາມສາມາດຂອງພໍ່ແມ່ອີກຄົນນຶ່ງທີ່ຈະເອົາ ຣາຍຣະອຽດຈາກກົມ DSHS.

ເມື່ອເວລາມີເງິນ TANF ປັດຈຸບັນ ຫລື ຜ່ານມາຖືກຈ່າຍໃຫ້ລູກຂອງທ່ານ, ທ່ານຕ້ອງໄດ້ທຳການແຈ້ງການໃຫ້ຣັດຊາບກ່ອນທີ່ຈະອອກໃບຄຳສັ່ງຈ່າຍ ເງິນລ້ຽງເດັກອອກມາ.

ໃຫ້ໃຊ້ *Declaration Regarding Public Assistance*, ຊຶ່ງສາມາດຖືກດາວໂຫລດໄດ້ຢູ່ທີ່ http://www.courts.wa.gov/forms/documents/drpscu1_0600.doc, ເພື່ອຈະແນະນຳບອກສານ, ວ່າຣັດບົ່ງໃຫ້ ມີການແຈ້ງການ ຫລື ບໍ່.

### ທ່ານຈະຄິດໄລ່ຈຳນວນເງິນລ້ຽງເດັກໄດ້ແນວໃດ?

ສິ່ງທີ່ທ່ານຈະຕ້ອງໄດ້ເຮັດແມ່ນມີແຕ່ໂທຫາ SEO ຂອງທ່ານເທົ່ານັ້ນ ແລະ ຂໍເອົາມັນ. Washington State Child Support Schedule (WSCSS) ໄດ້ຖືກໃຊ້ເພື່ອຈະກໍ່ຕັ້ງຈຳນວນເງິນລ້ຽງເດັກ, ບໍ່ກ່ຽວວ່າທ່ານຈະເຂົ້າເຮັດ ຄຳສັ່ງໃບໃຫມ່ ຫລື ດັດແປງຄຳສັ່ງທີ່ມີຢູ່ປັດຈຸບັນກໍຕາມ.

ທ່ານສາມາດໃຊ້ເຄື່ອງຄິດໄລ່ເງິນລ້ຽງເດັກທາງອອນລາຍນ໌ຢູ່ທີ່ https://fortress.wa.gov/dshs/dcs/SSGen/Home, ເພື່ອຈະຄິດໄລ່ເບິ່ງວ່າຄວນຈະເປັນຈຳນວນເທົ່າໃດ.

ຂໍ້ຄວາມຂອງສຳນວນເອກສານຂອງທ່ານຈະອະນຸຍາດໃຫ້ສຳລັບການ ກໍ່ຕັ້ງຄວາມຮັບຜິດຊອບເປັນຈຳນວນສູງກວ່າ ຫລື ຕ່ຳກວ່າຈຳນວນທີ່ ທ່ານໄດ້ມາຈາກການຄິດໄລ່ທັມມະດາ.

### ທ່ານຈະໄດ້ຈຳນວນເງິນຂອງຣາຍໄດ້ຂອງພໍ່ແມ່ອີກຝ່າຍນຶ່ງໄດ້ແນວໃດ?

ຄຳສັ່ງຈ່າຍເງິນລ້ຽງເດັກໄດ້ຖືກອີງໃສ່ຣາຍໄດ້ຂອງພໍ່ແມ່ແຕ່ລະຄົນ. *ແຕ່ວ່າຖ້າຫາກວ່າທ່ານບໍ່ມີໂກປີຂອງສິ້ນເຊັກຂອງພໍ່ແມ່ອີກຝາຍນຶ່ງເດ?*

ຖ້າຫາກວ່າທ່ານມີສຳນວນເອກສານນຳ DCS ເປີດຢູ່ ແລະ ທ່ານຕ້ອງ ການຄວາມຊ່ວຍເຫລືອໃນການຊອກຫາຣາຍຣະອຽດກ່ຽວກັບຣາຍໄດ້ສຳ ລັບຝ່າຍກົງກັນຂ້າມຂອງຄຳສັ່ງຈ່າຍເງິນລ້ຽງເດັກຂອງທ່ານ, DCS ອາດຈະສາມາດເອົາສິ່ງທີ່ທ່ານຕ້ອງການໃຫ້ໄດ້.

ທ່ານສາມາດໃຊ້ໃບຟອມຄຳຮ້ອງຂໍເອົາຣາຍຣະອຽດກ່ຽວກັບຣາຍໄດ້ ເພື່ອຈະຖາມ DCS ວ່າພວກເຮົາມີຣາຍຣະອຽດກ່ຽວກັບຣາຍໄດ້ສຳລັບ ຝ່າຍກົງກັນຂ້າມ ຫລື ບໍ່. ທ່ານສາມາດໄດ້ຟອມທາງອອນລາຍນ໌, ຈາກ ຜູ້ອຳນວຍຄວາມສະດວກຂອງສານ, ຫລື ຈາກຜູ້ໃຫ້ການບໍຣິການທາງ ດ້ານກົດໝາຍທ້ອງຖິ່ນຂອງທ່ານ.

ຖ້າຫາກວ່າທ່ານບໍ່ມີສຳນວນເອກສານນຳ DCS, ທ່ານສາມາດຮ້ອງຂໍໃຫ້ ພວກເຮົາທີ່ຈະພະຍາຍາມຊອກເອົາຣາຍຣະອຽດທີ່ທ່ານຕ້ອງການໂດຍ ການຂຽນປະກອບ ແລະ ການຍື່ນໃບຟອມ 18-701 ຊຶ່ງທ່ານສາມາດ ດາວໂຫລດໄດ້ທີ່ https://www.dshs.wa.gov/sites/default/files/ESA/dcs/documents/18-701.pdf.



### ທ່ານສາມາດບັງຄັບໃຊ້ຄຳສັ່ງຈ່າຍເງິນລ້ຽງເດັກຂອງທ່ານໄດ້ແນວໃດ?

ເຈັ້ຽເອກສານສຳລັບຄຳສັ່ງຈ່າຍເງິນລ້ຽງເດັກມີທາງເລືອກເອົາສຳລັບ ວ່າເງິນລ້ຽງເດັກຈະຖືກຈ່າຍໃຫ້ໄດ້ແນວໃດ. ຄຳສັ່ງສ່ວນຫລາຍເອົາການ ຈ່າຍເງິນໃຫ້ໂດຍຜ່ານ Washington State Support Registry (WSSR). ຖ້າຫາກທ່ານໄດ້ການຈ່າຍເງິນໂດຍຜ່ານ WSSR, ເຊັນຊື່ ໜ້າສຸດທ້າຍຂອງໃບຄຳສັ່ງເພື່ອຈະຮ້ອງຂໍເອົາການບໍຣິການບັງຄັບໃຊ້ຂອງ DCS.

### ຖ້າຫາກວ່າທ່ານບໍ່ມີຄຳສັ່ງຈ່າຍເງິນລ້ຽງເດັກເດ, ແຕ່ວ່າຕ້ອງການໃບນຶ່ງ?

ເຖິງແມ່ນວ່າພວກເຮົາບໍ່ສາມາດທີ່ຈະຊ່ວຍທ່ານໄດ້ນຳການຢ່າຮ້າງ ຫລື ແຜນການລ້ຽງລູກຂອງທ່ານ, ພວກເຮົາອາດຈະສາມາດຊ່ວຍເຫລືອທ່ານ ໃນການຂໍເອົາຄຳສັ່ງຈ່າຍເງິນລ້ຽງເດັກຈາກອຳນາດການປົກຄອງ.

ຕິດຕໍ່ຫາພວກເຮົາໄດ້ທີ່:

**1-800-442-KIDS**

ຫລື ແວ່ເຂົ້າປ້ຽມແວບໄຊທ໌ຂອງພວກເຮົາໄດ້ທີ່:

www.childsupportonline.wa.gov